ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ ເລກທີ 151 /ລບ

ນະຄອນຫຼວງວຽງຈັນ, ວັນທີ 28.4.2014

# ດຳລັດ
# ວ່າດ້ວຍໂຮງໝໍເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ກົດໝາຍວ່າດ້ວຍ ການປິ່ນປົວ ສະບັບເລກທີ 09/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 0206/ສທ, ລົງວັນທີ 12 ກຸມພາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການ ໂຮງໝໍເອກະຊົນ ເພື່ອໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍດັ່ງກ່າວຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດຖະບານ ແນໃສ່ເຮັດໃຫ້ການບໍລິການ ສາທາລະນະສຸກ ມີຄຸນນະພາບ, ມີປະສິດທິພາບ ແລະ ຍຸຕິທຳ.

### ມາດຕາ 2 ໂຮງໝໍເອກະຊົນ

ໂຮງໝໍເອກະຊົນ ແມ່ນສະຖານທີ່ບໍລິການ ກວດພະຍາດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູ, ສົ່ງເສີມສຸຂະພາບ ແລະ ກັນພະຍາດ ຂອງພາກເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງມີການປະກອບອຸປະກອນການແພດ, ຕຽງນອນ ແລະ ຜູ້ປະກອບວິຊາຊີບປິ່ນປົວ ຕາມລະບຽບການ.

### ມາດຕາ 3 ຂອບເຂດການນໍາໃຊ້ດໍາລັດ

ດໍາລັດສະບັບນີ້ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ທີ່ດໍາເນີນກິດຈະການໂຮງໝໍເອກະຊົນ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ລັກສະນະ, ຂະໜາດ ໂຮງໝໍເອກະຊົນ

### ມາດຕາ 4 ປະເພດໂຮງໝໍເອກະຊົນ

ໂຮງໝໍເອກະຊົນປະກອບມີ ສອງ ປະເພດ ດັ່ງນີ້:

1). ໂຮງໝໍເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ (100%);

2). ໂຮງໝໍຮຸ້ນສ່ວນ ລັດ ກັບ ເອກະຊົນ.

### ມາດຕາ 5 ລັກສະນະໂຮງໝໍເອກະຊົນ

ໂຮງໝໍເອກະຊົນມີ ສາມ ລັກສະນະ ດັ່ງນີ້:

1). ໂຮງໝໍທົ່ວໄປ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ໂດຍປະກອບດ້ວຍຫຼາຍວິຊາການທາງການແພດທີ່ແຕກຕ່າງກັນ ແຕ່ອາດຈະລົງເລິກວິຊາການແພດຊ່ຽວຊານໃດໜຶ່ງ;

2). ໂຮງໝໍສະເພາະວິຊາ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ແຕ່ໝວດວິຊາການແພດໃດໜຶ່ງ ທີ່ເປັນລັກສະນະຊ່ຽວຊານສະເພາະວິຊາເປັນຕົ້ນຕໍ;

3). ໂຮງໝໍການແພດພື້ນເມືອງ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ວິຊາການແພດພື້ນເມືອງເປັນຕົ້ນຕໍ.

### ມາດຕາ 6 ຂັ້ນ ຂອງໂຮງໝໍເອກະຊົນ

ໂຮງໝໍເອກະຊົນມີ ສາມ ຂັ້ນ ດັ່ງນີ້:

ຂັ້ນ 1. ເປັນໂຮງໝໍຂະໜາດໃຫຍ່

ຂັ້ນ 2. ເປັນໂຮງໝໍຂະໜາດກາງ

ຂັ້ນ 3. ເປັນໂຮງໝໍຂະໜາດນ້ອຍ